# 11

# ການຂັບຂີ່ ທີ່ປອດໄພ

## ທັດສະນະວິໄສທີ່ດີ

ຈຸດສຳຄັນຂອງທັດສະນະວິໄສທີ່ດີ ແມ່ນການສັງເກດ ເຊິ່ງໝາຍເຖິງການໃຊ້ສາຍຕາເບິ່ງໄປອ້ອມຮອບລົດ ເພື່ອກວດກາ ເບິ່ງຈຸດໃດໜຶ່ງ ໂດຍໃຊ້ເວລາ 1–2 ວິນາທີ ແລະ ຫຼັງຈາກນັ້ນ ຈຶ່ງຍ້າຍຈຸດ focus ສາຍຕາໄປຈຸດອື່ນ. ສິ່ງທີ່ຕ້ອງສັງເກດ ຢ່າງເປັນປະຈຳ ມີ:

- ໄລຍະຫ່າງລະຫວ່າງລົດທ່ານ ແລະ ລົນຄັນທາງໜ້າ
- ພື້ນຜິວຖະໜົນ
- ດ້ານຊ້າຍ ແລະ ດ້ານຂວາ
- ເບິ່ງແວ່ນລົດເປັນປະຈຳ ແລະ ແຜງໜ້າປັດລົດ



ສິ່ງທີ່ສ່ຽງຕໍ່ການເກີດອຸບປະຕິເຫດ ແມ່ນສິ່ງທີ່ມີຜົນກໍ່ໃຫ້ເກີດອຸບປະຕິເຫດຢ່າງແນ່ນອນ ຫຼື ອາດຈະມີຜົນກໍ່ໃຫ້ເກີດອຸບປະຕິເຫດ ເຊິ່ງສິ່ງນັ້ນອາດຈະສາມາດແນມເຫັນ ຫຼື ບໍ່ສາມາດ ແນມເຫັນກໍ່ໄດ້ ລວມມີ:

- ຄົນຍ່າງທີ່ລໍຖ້າຂ້າມທາງ
- ຈຸດອັບສາຍຕາ
- ລົດທີ່ກໍາລັງຮອເຂົ້າຮ່ວມ ຫຼື ກໍາລັງຈະຈອດຢູ່ແຄມທາງ
- ສະພາບໜ້າທາງບໍ່ດີ



ໃຫ້ກວດກາແວ່ນລົດທຸກຄັ້ງ ກ່ອນຈະຫຼຸດຜ່ອນຄວາມໄວລົດ ຫຼື ປ່ຽນທິດທາງລົດ



ຜູ້ຂັບຂີ່ມີສຸຂະພາບແຂງແຮງ, ມີສະມາທິໃນການຂັບຂີ່,
ມີຄວາມຕື່ນໂຕ ແລະ ບໍ່ມີອາການ ມຶນເມົາ, ອິດເມື່ອຍ ຫຼື ໃຈລອຍ;
ຍັງຕ້ອງໃຊ້ເວລາ 1,5 ວິນາທີ ເພື່ອຮັບຮູ້ເຖິງອັນຕະລາຍທີ່
ຈະກໍ່ໃຫ້ເກີດອຸບປະຕິເຫດ.

# ການຂີ່ລົດຕາມຫຼັງຄັນອື່ນ






| ຄວາມໄວ | ໄລຍະຫ່າງທີ່ສາມາດຫຼີກລ້ຽງອຸບປະຕິເຫດ |
| --- | --- |
| 60 km/h | 50 m |
| 80 km/h | 67 m |
| 100 km/h | 84 m |
| 110 km/h | 92 m |